ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊຳລະສະສາງ

ເລກທີ 761 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 02 ມີນາ 2021

# ແຈ້ງການ

**ເຖິງ:** ທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ນິຕິບຸກຄົນ ທີ່ເປັນຜູ້ໃຫ້ບໍລິການຊຳລະ.

**ເລື່ອງ:** ການຕິດຕາມກວດກາການໃຊ້ບໍລິການຊຳລະ.

- ອີງຕາມ ກົດໝາຍ ວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020;
- ອີງຕາມ ສະພາບປະກົດການຫຍໍ້ທໍ້ພາຍໃນສັງຄົມປັດຈຸບັນ.

ກົມຄຸ້ມຄອງລະບົບຊຳລະສະສາງ (ຄລຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜ່ານການກວດກາໃນໄລຍະຜ່ານມາ ມີກຸ່ມຄົນ ແລະ ບໍລິສັດຈຳນວນໜຶ່ງໄດ້ສວຍໃຊ້ຜະລິດຕະພັນ, ຊ່ອງທາງ ແລະ ເຄື່ອງມືການຊຳລະຂອງທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ນິຕິບຸກຄົນ ທີ່ໃຫ້ບໍລິການຊຳລະບໍ່ສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ຜູ້ໃຫ້ບໍລິການຊຳລະວາງອອກ ເຊັ່ນ: ການນຳໃຊ້ປ້າຍ QR Code ເພື່ອຮັບເງິນໂອນໃຫ້ແກ່ບຸກຄົນທີສາມ ແລະ ການນຳໃຊ້ເຄື່ອງ POS ເພື່ອແລກປ່ຽນເງິນຕາຕ່າງປະເທດ ທີ່ບໍ່ແມ່ນການຮັບຊຳລະຄ່າສິນຄ້າ ຫຼື ບໍລິການພາຍໃນຫ້າງຮ້ານຂອງຕົນ, ຊຶ່ງການດຳເນີນການດັ່ງກ່າວ ເປັນການລະເມີດກົດໝາຍ ວ່າດ້ວຍລະບົບການຊຳລະ.

ສະນັ້ນ, ເພື່ອເປັນການສະກັດກັ້ນປະກົດການດັ່ງກ່າວ ແລະ ເຮັດໃຫ້ການຊຳລະຕົວຈິງຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ທັງເປັນການປົກປ້ອງຜົນປະໂຫຍດຂອງຜູ້ໃຊ້ບໍລິການ ແລະ ຮັບປະກັນໃຫ້ການຕິດຕາມກວດກາການນຳໃຊ້ຜະລິດຕະພັນ, ຊ່ອງທາງ ແລະ ເຄື່ອງມືການຊຳລະໃຫ້ມີປະສິດທິພາບຍິ່ງຂຶ້ນ, ຄລຊ ຈຶ່ງຂໍແຈ້ງມາຍັງທ່ານ ໃຫ້ຈັດຕັ້ງປະຕິບັດ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຕິດຕາມ, ກວດກາ ແລະ ຊອກຮູ້ຂໍ້ມູນລູກຄ້າ (KYC/CDD) ກ່ອນການໃຫ້ບໍລິການ ໂດຍສະເພາະ ຜູ້ນຳໃຊ້ຜະລິດຕະພັນ, ຊ່ອງທາງ ແລະ ເຄື່ອງມືການຊຳລະຂອງຕົນຢ່າງເຂັ້ມງວດ;
2. ດຳເນີນການເຜີຍແຜ່ໃຫ້ຄວາມຮູ້ກ່ຽວກັບລະບຽບການຄຸ້ມຄອງ ແລະ ນຳໃຊ້ຜະລິດຕະພັນຂອງຕົນ ດ້ວຍຫຼາຍຮູບການ ແລະ ຫຼາຍຊ່ອງທາງ ເຊັ່ນ: ການອອກແຈ້ງການ, ການໂຄສະນາເຜີຍແຜ່ຜ່ານສື່ມວນຊົນ ແລະ ສື່ສັງຄົມອອນລາຍ ໃຫ້ແກ່ຮ້ານຄ້າ ແລະ ຜູ້ໃຊ້ບໍລິການ ເພື່ອປ້ອງກັນບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນທີ່ບໍ່

ຫວັງດີ ທີ່ນຳເອົາຜະລິດຕະພັນ, ຊ່ອງທາງ ແລະ ເຄື່ອງມືການຊຳລະໄປໃຊ້ໃນທາງທີ່ບໍ່ຖືກຕ້ອງ ໂດຍສະເພາະຕິດພັນກັບການຊັກຊວນໄປລົງທຶນໃນຮູບແບບຕ່າງໆທີ່ບໍ່ໄດ້ຮັບອະນຸຍາດ.

3. ຮີບຮ້ອນດຳເນີນການທົບທວນສັນຍາ/ແບບຟອມການນຳໃຊ້ຜະລິດຕະພັນ, ຊ່ອງທາງ ແລະ ເຄື່ອງມືການຊຳລະ ກັບຮ້ານຄ້າທີ່ຕົນໃຫ້ບໍລິການ ໃຫ້ສອດຄ່ອງກັບການຮັບຊຳລະສິນຄ້າ ແລະ ບໍລິການຕົວຈິງ ແລະ ຮັບປະກັນກົນໄກການຈັດຕັ້ງປະຕິບັດມາດຕະການຕໍ່ຜູ້ລະເມີດ;

4. ກໍລະນີພົບເຫັນ ຫຼື ສົງໄສວ່າ ມີການເຄື່ອນໄຫວຕິດພັນກັບການຊຳລະທີ່ບໍ່ສອດຄ່ອງ ຫຼື ລະເມີດລະບຽບກົດໝາຍ ແມ່ນໃຫ້ຢຸດເຊົາການດຳເນີນທຸລະກຳເຫຼົ່ານັ້ນທັນທີ, ຫຼັງຈາກນັ້ນ ໃຫ້ສັງລວມຂໍ້ມູນທີ່ກ່ຽວຂ້ອງແລ້ວລາຍງານມາຍັງ ຄລຊ;

5. ກໍລະນີສົງໄສວ່າ ມີທຸລະກຳຂອງບຸກຄົນ, ນິຕິບຸກຄົນ ແລະ ຮ້ານຄ້າ ທີ່ໃຊ້ບໍລິການຊຳລະຂອງຕົນ ມີການເຄື່ອນໄຫວທີ່ອາດກ່ຽວຂ້ອງກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນໃຫ້ສັງລວມຂໍ້ມູນ ແລະ ລາຍງານໂດຍກົງໄປຍັງ ສຳນັກງານຂໍ້ມູນຕ້ານການຟອກເງິນ ພ້ອມທັງສຳເນົາໃຫ້ ຄລຊ ຮັບຊາບທັນທີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງລະບົບຊຳລະສະສາງ

ສຸລິສັກ ທຳມຸວົງ